ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 4739/ກປ

ນະຄອນຫຼວງວຽງຈັນ, ວັນທີ 19 SEP 2024

## ໜັງສືແຈ້ງຕອບ

**ຮຽນ:** ທ່ານ ລັດຖະມົນຕີກະຊວງຍຸຕິທຳ ທີ່ນັບຖື.

**ເລື່ອງ:** ແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງກະສິກຳ ແລະ ປ່າໄມ້.

- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງຍຸຕິທຳ ສະບັບເລກທີ 1202/ກຍ, ລົງວັນທີ 16 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 3651/ຫກ, ລົງວັນທີ 17 ກັນຍາ 2024.

ກະຊວງກະສິກຳ ແລະ ປ່າໄມ້, ພາຍຫຼັງໄດ້ຄົ້ນຄວ້າບັນດາກົດໝາຍທີ່ມີຜົນສັກສິດໃນປັດຈຸບັນ ແລະ ປະເມີນບັນດາວຽກງານທີ່ຕິດພັນກັບຄວາມຮັບຜິດຊອບຄຸ້ມຄອງມະຫາພາກຂອງຕົນແລ້ວ ເຫັນວ່າ: ມີຄວາມຈຳເປັນຕ້ອງໄດ້ປັບປຸງ ແລະ ສ້າງເປັນກົດໝາຍໃໝ່ ເພື່ອສະເໜີເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ຈຳນວນ 05 ສະບັບ, ໃນນີ້ສ້າງໃໝ່ 02 ສະບັບ ແລະ ປັບປຸງ 03 ສະບັບ ດັ່ງນີ້:

| ລ/ດ | ຊື່ກົດໝາຍ | ສ້າງໃໝ່, ປັບປຸງ | ຄາດຄະເນ (ປີ) | ກົມ, ສະຖາບັນ ຮັບຜິດຊອບ |
|---|---|---|---|---|
| 1 | ກົດໝາຍ ວ່າດ້ວຍ ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ | ສ້າງໃໝ່ | 2027 | ກົມພັດທະນາຊົນນະບົດ |
| 2 | ກົດໝາຍ ວ່າດ້ວຍ ຢາປາບສັດຕູພືດ | ສ້າງໃໝ່ | 2028 | ກົມປູກຝັງ |
| 3 | ກົດໝາຍ ວ່າດ້ວຍ ຄວາມປອດໄພດ້ານເຕັກໂນໂລຊີ ຊີວະພາບ | ປັບປຸງ | 2028 | ສະຖາບັນພີເອດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ |
| 4 | ກົດໝາຍ ວ່າດ້ວຍ ປ່າໄມ້ | ປັບປຸງ | 2029 | ກົມປ່າໄມ້ |
| 5 | ກົດໝາຍ ວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ | ປັບປຸງ | 2029 | ກົມພັດທະນາຊົນນະບົດ |

(ສຳລັບເຫດຜົນ ແລະ ຄວາມຈຳເປັນໃນການສ້າງ ແລະ ປັບປຸງບັນດາກົດໝາຍດັ່ງກ່າວ ໄດ້ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ.

ລັດຖະມົນຕີ

ລິນຄຳ ດວງສະຫວັນ

**ບ່ອນນຳສົ່ງ:**

1. ຫສນຍ 01 ສະບັບ (ໃຊ້ຕາງລາຍງານ);
2. ທ່ານ ລມຕ, ຮລຕ ທ່ານລະ 01 ສະບັບ (ເພື່ອຊາບ);
3. ຫ້ອງການກະຊວງ 01 ສະບັບ (ເພື່ອຕິດຕາມ);
4. ກົມ, ສະຖາບັນກ່ຽວຂ້ອງ ບ່ອນລະ 01 ສະບັບ (ເພື່ອກະກຽມ);
5. ເກັບຮັກສາໄວ້ 01 ສະບັບ.